ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 015 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 28 JUN 2019

# ຂໍ້ຕົກລົງ
# ວ່າດ້ວຍການອອກຈຳໜ່າຍຮຸ້ນກູ້

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 195/ນຍ, ລົງວັນທີ 12 ມິຖຸນາ 2017;
- ອີງຕາມໜັງສືສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັ ສະບັບເລກທີ 0020/ສຄຄຊ, ລົງວັນທີ 28 ມິຖຸນາ 2019.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ເພື່ອລະດົມທຶນຂອງບໍລິສັດ ຢູ່ ສປປ ລາວ ແນໃສ່ເຮັດໃຫ້ການເຄື່ອນໄຫວດັ່ງກ່າວມີຄວາມຮັບປະກັນ, ເປັນລະບຽບຮຽບຮ້ອຍ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

**ມາດຕາ 2 (ໃໝ່) ການອອກຈຳໜ່າຍຮຸ້ນກູ້**

ການອອກຈຳໜ່າຍຮຸ້ນກູ້ ແມ່ນການເອົາຮຸ້ນກູ້ຂອງບໍລິສັດ ຂາຍໃຫ້ແກ່ຜູ້ລົງທຶນ. ການອອກຈຳໜ່າຍຮຸ້ນກູ້ ຕ້ອງໄດ້ຮັບອະນຸຍາດຈາກ ຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 3 (ປັບປຸງ) ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບໍລິສັດອອກຈຳໜ່າຍຮຸ້ນກູ້** ໝາຍເຖິງ ບໍລິສັດ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການນຳເອົາຮຸ້ນກູ້ຂອງຕົນອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນ;

2. **ບໍລິສັດກວດສອບ** ໝາຍເຖິງ ບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃຫ້ບໍລິການກວດສອບ ໃນຂົງເຂດວຽກງານຫຼັກຊັບ;
3. **ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື** ໝາຍເຖິງ ບໍລິສັດ ທີ່ໄດ້ຮັບ ການຮັບຮອງ ຫຼື ອະນຸຍາດຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃຫ້ເປັນ ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖືໃນຂົງເຂດວຽກງານຫຼັກຊັບ;
4. **ທີ່ປຶກສາດ້ານການເງິນ** ໝາຍເຖິງ ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃຫ້ເປັນ ທີ່ປຶກສາດ້ານການເງິນ ໃນຂົງເຂດວຽກງານຫຼັກຊັບ;
5. **ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້** ໝາຍເຖິງ ບໍລິສັດຫຼັກຊັບ ຫຼື ທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເຮັດໜ້າທີ່ເປັນ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້;
6. **ຕົວແທນຜູ້ຖືຮຸ້ນກູ້** ໝາຍເຖິງ ທະນາຄານທຸລະກິດ ຫຼື ບໍລິສັດຫຼັກຊັບ ທີ່ເຮັດໜ້າທີ່ເປັນຜູ້ຕາງໜ້າຜູ້ຖືຮຸ້ນກູ້ ແລະ ເປັນຜູ້ໃຫ້ບໍລິການແກ່ຜູ້ອອກຈໍາໜ່າຍຮຸ້ນກູ້ ເພື່ອຕິດຕາມການເຄື່ອນ ໄຫວແລະ ການປະຕິບັດພັນທະຂອງຜູ້ອອກຈໍາໜ່າຍຮຸ້ນກູ້ ຕໍ່ຜູ້ຖືຮຸ້ນກູ້ ຕາມຂອບເຂດສິດ ແລະ ໜ້າທີ່ ທີ່ກໍານົດໄວ້ໃນ ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້;
7. **ຜູ້ປະເມີນມູນຄ່າຊັບສິນ** ໝາຍເຖິງ ຄະນະກໍາມະການປະເມີນມູນຄ່າຊັບສິນ ຫຼື ບໍລິສັດປະເມີນມູນຄ່າຊັບສິນ ທີ່ໄດ້ຮັບອະນຸຍາດ ຈາກອົງການທີ່ມີສິດອໍານາດ ພ້ອມທັງໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
8. **ຜູ້ມີອໍານາດຄວບຄຸມ** ໝາຍເຖິງ ຜູ້ຖືຮຸ້ນທີ່ມີສິດອອກສຽງ ບໍ່ວ່າທາງກົງ ຫຼື ທາງອ້ອມ ຫຼາຍກວ່າຊາວຫ້າສ່ວນຮ້ອຍ ຂອງຈໍານວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດ ຫຼື ສະມາຊິກສະພາບໍລິຫານ ແລະ ຄະນະອໍານວຍການຂອງບໍລິສັດ ທີ່ມີສ່ວນກ່ຽວຂ້ອງກັບການກໍານົດນະໂຍບາຍ, ການບໍລິຫານ ຫຼື ການເຄື່ອນໄຫວທຸລະກິດທີ່ສໍາຄັນຂອງບໍລິສັດອອກຈໍາໜ່າຍຮຸ້ນກູ້;
9. **ໃບຢັ້ງຢືນການຖືຄອງຮຸ້ນກູ້** ໝາຍເຖິງ ໜັງສືແຈ້ງໃຫ້ຜູ້ລົງທຶນ ຊາບກ່ຽວກັບຜົນການຊື້ຮຸ້ນກູ້, ເງື່ອນໄຂຮຸ້ນກູ້ ແລະ ສິດຂອງຜູ້ລົງທຶນ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້, ບໍລິສັດອອກຈໍາໜ່າຍຮຸ້ນກູ້, ບໍລິສັດກວດສອບ, ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື, ບໍລິສັດຫຼັກຊັບ, ທະນາຄານທຸລະກິດ, ຕົວແທນຜູ້ຖືຮຸ້ນກູ້, ຜູ້ປະເມີນມູນຄ່າຊັບສິນ, ຜູ້ຄໍ້າປະກັນການຊໍາລະໜີ້, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນກ່ຽວຂ້ອງທີ່ມີສ່ວນຮ່ວມໃນການອອກຈໍາໜ່າຍຮຸ້ນກູ້ ຢູ່ ສປປ ລາວ.

**ມາດຕາ 5 ຄຸນລັກສະນະຂອງຮຸ້ນກູ້**

ຮຸ້ນກູ້ ຕ້ອງມີຄຸນລັກສະນະພື້ນຖານ ດັ່ງນີ້:

1. ສາມາດຊື້-ຂາຍ ແລະ ປ່ຽນມືໄດ້;
2. ມີຜົນຕອບແທນ;
3. ມີອາຍຸ ໜຶ່ງ, ສາມ, ຫ້າ, ເຈັດ, ສິບ ຫຼື ສິບຫ້າ ປີ;

4. ເປັນສະກຸນເງິນກີບ ຫຼື ສະກຸນເງິນຕາຕ່າງປະເທດ ຕາມການອະນຸຍາດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
5. ມູນຄ່າກໍານົດ ໃນໃບຮຸ້ນກູ້ ບໍ່ໃຫ້ຫຼຸດ 1.000.000 ກີບ.

**ມາດຕາ 6 (ປັບປຸງ) ໃບຢັ້ງຢືນການຖືຄອງຮຸ້ນກູ້**

ໃບຢັ້ງຢືນການຖືຄອງຮຸ້ນກູ້ ຕ້ອງມີຂໍ້ມູນຕົ້ນຕໍ ດັ່ງນີ້:

1. ຊື່ບໍລິສັດອອກຈໍາໜ່າຍຮຸ້ນກູ້;
2. ເລກທີໃບທະບຽນວິສາຫະກິດ ຂອງບໍລິສັດອອກຈໍາໜ່າຍຮຸ້ນກູ້;
3. ປະເພດຂອງຮຸ້ນກູ້;
4. ອາຍຸ ແລະ ວັນທີ, ເດືອນ, ປີ ຄົບກໍານົດເວລາໄຖ່ຖອນຂອງຮຸ້ນກູ້;
5. ຜົນຕອບແທນ;
6. ຈໍານວນຮຸ້ນກູ້;
7. ມູນຄ່າກໍານົດໃນໃບຮຸ້ນກູ້;
8. ວິທີການ, ກໍານົດເວລາໃນການຊໍາລະຕົ້ນທຶນ ແລະ ດອກເບ້ຍ;
9. ລາຍເຊັນຂອງ ຜູ້ມີສິດອໍານາດ ແລະ ຕາປະທັບຂອງ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຫຼື ບໍລິສັດອອກຈໍາໜ່າຍຮຸ້ນກູ້ ກໍລະນີ ການອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ.

**ມາດຕາ 7 ຮູບແບບການອອກຈໍາໜ່າຍຮຸ້ນກູ້**

ການອອກຈໍາໜ່າຍຮຸ້ນກູ້ ມີ ສອງ ຮູບແບບ ຄື ການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ແລະ ການອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ.

## ໝວດທີ 2
## ການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ

**ມາດຕາ 8 ການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ແມ່ນການອອກຈໍາໜ່າຍຮຸ້ນກູ້ ຄັ້ງທໍາອິດ ຫຼື ການອອກເພີ່ມ ທີ່ບໍ່ມີການກໍານົດປະເພດ ຫຼື ກຸ່ມຜູ້ລົງທຶນສະເພາະໃດໜຶ່ງ ຊຶ່ງມີຜູ້ລົງທຶນຫຼາຍກວ່າ ໜຶ່ງຮ້ອຍລາຍ ຂຶ້ນໄປ.

**ມາດຕາ 9 (ປັບປຸງ) ເງື່ອນໄຂການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດມະຫາຊົນ ຫຼື ບໍລິສັດຈໍາກັດ (ຍົກເວັ້ນ ບໍລິສັດຈໍາກັດຜູ້ດຽວ);
2. ສ້າງຕັ້ງ ແລະ ເຄື່ອນໄຫວມາແລ້ວ ຢ່າງໜ້ອຍ ສາມປີ ຍົກເວັ້ນກໍລະນີ ບໍລິສັດ ຫາກມີການແຍກ, ຄວບ ຫຼື ຫັນເປັນບໍລິສັດຮູບແບບໃໝ່ ຈາກ ບໍລິສັດເດີມທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢ່າງໜ້ອຍ ສາມປີ;

3. ມີແຜນການອອກຈຳໜ່າຍຮຸ້ນກູ້ ແລະ ການນຳໃຊ້ທຶນ ໂດຍຜ່ານການຮັບຮອງຈາກ ກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ;
4. ມີເອກະສານລາຍງານການເງິນ ໜຶ່ງປີ ຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ ໃຫ້ແກ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ;
5. ມີຕົວແທນຜູ້ຖືຮຸ້ນກູ້ ກໍລະນີ ການອອກຈຳໜ່າຍຮຸ້ນກູ້ ມີຫຼັກຊັບຄ້ຳປະກັນ ຫຼື ມີຜູ້ຄ້ຳປະກັນການຊຳລະໜີ້;
6. ມີກຳໄລສະເລ່ຍ ສາມປີ ຄືນຫຼັງທີ່ພຽງພໍ ສຳລັບການຊຳລະດອກເບ້ຍຮຸ້ນກູ້ທັງໝົດ ໃນ ໜຶ່ງ ປີຕໍ່ໜ້າ;
7. ມີແຜນການຊຳລະຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນແຫຼ່ງທຶນສຳລັບການ ຊຳລະດັ່ງກ່າວ;
8. ມີການຈັດລຳດັບຄວາມໜ້າເຊື່ອຖືຂອງຮຸ້ນກູ້ທີ່ຈະອອກຈຳໜ່າຍ ຢ່າງຕ່ຳ BBB ຂຶ້ນໄປ. ກໍລະນີບໍ່ມີການຈັດລຳດັບຄວາມໜ້າເຊື່ອຖື ຕ້ອງມີຜູ້ຄ້ຳປະກັນການຊຳລະໜີ້;
9. ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍຂອງຮຸ້ນກູ້ໃນບ້ວງທີ່ອອກຜ່ານມາ ຕາມກຳນົດເວລາໃນການຊຳລະ ກໍລະນີ ທີ່ມີການອອກຈຳໜ່າຍຮຸ້ນກູ້ເພີ່ມ;
10. ສຳລັບ ການອອກຈຳໜ່າຍຮຸ້ນກູ້ເພີ່ມ ຕ້ອງມີຍອດເຫຼືອຮຸ້ນກູ້ທັງໝົດ ຊຶ່ງຕ່ຳກວ່າ ສາມສິບສ່ວນຮ້ອຍ ຂອງມູນຄ່າຊັບສິນສຸດທິ ຕາມໃບລາຍງານຖານະການເງິນປີຫຼ້າສຸດ ກ່ອນຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
11. ມີເງື່ອນໄຂອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 10 (ປັບປຸງ) ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄຳຮ້ອງຂໍອອກຈຳໜ່າຍຮຸ້ນກູ້ ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາໃບທະບຽນວິສາຫະກິດ ແລະ ສຳເນົາໃບທະບຽນສຳປະທານ ກໍລະນີ ເປັນທຸລະກິດສຳປະທານ;
3. ສຳເນົາໃບຢັ້ງຢືນປະຈຳຕົວຜູ້ເສຍອາກອນ;
4. ສຳເນົາກົດລະບຽບຂອງບໍລິສັດ;
5. ມະຕິກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ທີ່ຮັບຮອງກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ແລະ ການນຳໃຊ້ທຶນ;
6. ບັນຊີລາຍຊື່ຜູ້ຖືຮຸ້ນ ແຕ່ ໜຶ່ງສ່ວນຮ້ອຍ ຂຶ້ນໄປ;
7. ໃບຢັ້ງຢືນຄວາມພ້ອມການອອກຈຳໜ່າຍຮຸ້ນກູ້ຈາກ ທີ່ປຶກສາດ້ານການເງິນ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້;

8. ບົດລາຍງານການປະເມີນມູນຄ່າຊັບສິນ ໂດຍໄດ້ຮັບການຮັບຮອງຈາກຜູ້ປະເມີນມູນຄ່າຊັບສິນ ກໍລະນີ ການອອກຈໍາໜ່າຍຮຸ້ນກູ້ ມີຫຼັກຊັບຄໍ້າປະກັນ.
9. ເອກະສານລາຍງານການເງິນ ໜຶ່ງປີ ຄືນຫຼັງ ນັບແຕ່ປີຍື່ນຄໍາຮ້ອງ ແລະ ເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ ໃຫ້ແກ່ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ;
10. ເອກະສານ ກ່ຽວກັບແຜນການຊໍາລະຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນແຫຼ່ງທຶນສໍາລັບການຊໍາລະດັ່ງກ່າວ;
11. ໜັງສືຊວນຊື້;
12. ຂໍ້ກໍານົດກ່ຽວກັບສິດ ແລະ ໜ້າທີ່ຂອງຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້;
13. ສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ລະຫວ່າງ ບໍລິສັດອອກຈໍາໜ່າຍຮຸ້ນກູ້ ກັບ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້;
14. ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ ກໍລະນີ ການອອກຈໍາໜ່າຍຮຸ້ນກູ້ ມີຫຼັກຊັບຄໍ້າປະກັນ ຫຼື ມີຜູ້ຄໍ້າປະກັນການຊໍາລະໜີ້;
15. ບົດລາຍງານການຈັດລໍາດັບຄວາມໜ້າເຊື່ອຖືຂອງ ຮຸ້ນກູ້ທີ່ຈະອອກຈໍາໜ່າຍ ຫຼື ຜູ້ຄໍ້າປະກັນການຊໍາລະໜີ້ ຈາກ ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື;
16. ສັນຍາຄໍ້າປະກັນການຊໍາລະໜີ້ ຈາກ ຜູ້ຄໍ້າປະກັນການຊໍາລະໜີ້ (ຖ້າມີ);
17. ເອກະສານອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ ຕ້ອງຮ່ວມກັບທີ່ປຶກສາດ້ານການເງິນ ເປັນຜູ້ກະກຽມເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນໃນແຕ່ລະຄັ້ງ ຊຶ່ງຕ້ອງຮັບຜິດຊອບຕໍ່ເນື້ອໃນ ແລະ ຂໍ້ມູນທີ່ບົ່ງໄວ້ໃນເອກະສານດັ່ງກ່າວ ພ້ອມທັງເກັບຮັກສາເອກະສານປະຕິບັດງານທີ່ກ່ຽວຂ້ອງດັ່ງກ່າວໄວ້ ຢ່າງໜ້ອຍ ສິບປີ.

**ມາດຕາ 11 (ປັບປຸງ) ເອກະສານລາຍງານການເງິນ**

ເອກະສານລາຍງານການເງິນຂອງ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ ໃຫ້ແກ່ມວນຊົນ ປະກອບດ້ວຍ ໃບລາຍງານຖານະການເງິນ, ໃບລາຍງານຜົນການດໍາເນີນງານ, ໃບລາຍງານກະແສເງິນສົດລວມ, ໃບລາຍງານສ່ວນປ່ຽນແປງຂອງທຶນຕົນເອງ ແລະ ບົດອະທິບາຍກ່ຽວກັບຫຼັກການ ແລະ ນະໂຍບາຍບັນຊີທີ່ໄດ້ນໍາໃຊ້ ແລະ ອື່ນໆ. ເອກະສານລາຍງານການເງິນ ຕ້ອງຜ່ານການກວດສອບຈາກ ບໍລິສັດກວດສອບ ທີ່ໄດ້ຮັບການກວດສອບຈາກ ຄະນະກໍາມະການຄຸ້ມຄອງຫຼັກຊັບ.

ກໍລະນີ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຫາກເປັນກຸ່ມບໍລິສັດ ເອກະສານລາຍງານການເງິນນັ້ນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນແບບແຍກກິດຈະການ ແລະ ລວມກິດຈະການ.

ເອກະສານລາຍງານການເງິນ ໜຶ່ງປີ ຄືນຫຼັງ ທີ່ໃຊ້ເຂົ້າໃນການປະກອບເອກະສານການຮ້ອງຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງສ້າງຂຶ້ນຕາມມາດຕະຖານການບັນຊີ ແລະ ມາດຕະຖານການລາຍງານດຽວກັນຕາມລະບຽບການທີ່ກ່ຽວຂ້ອງທີ່ປະກາດໃຊ້ໃນແຕ່ລະໄລຍະ.

ສໍາລັບ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຫາກມີການແຍກ, ຄວບ ຫຼື ຫັນເປັນບໍລິສັດມະຫາຊົນ ເອກະສານລາຍງານການເງິນ ໜຶ່ງປີ ຄືນຫຼັງ ຕ້ອງສ້າງຂຶ້ນໃນຮູບແບບເອກະສານລາຍ

ງານການເງິນສົມມຸດຖານ ພ້ອມນັ້ນ ເອກະສານລາຍງານການເງິນ ໜຶ່ງປີ ຄືນຫຼັງຂອງບໍລິສັດດັ່ງກ່າວ ກ່ອນມີການແຍກ, ຄວບ ຫຼື ທັນເປັນບໍລິສັດມະຫາຊົນ ຕ້ອງໄດ້ຜ່ານການກວດສອບຈາກ ບໍລິສັດກວດສອບ.

ກໍລະນີ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຍື່ນຄໍາຮ້ອງ ແລະ ເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໃຫ້ແກ່ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍຫຼັງວັນທີ 30 ມິຖຸນາ ຕ້ອງປະກອບມີ ເອກະສານລາຍງານການເງິນປະຈໍາ ຫົກເດືອນຕົ້ນປີ ຂອງປີທີ່ຮ້ອງຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໂດຍຜ່ານການທົບທວນຈາກ ບໍລິສັດກວດສອບ.

ກໍລະນີ ມີເຫດການສໍາຄັນເກີດຂຶ້ນພາຍຫຼັງວັນທ້າຍງວດຂອງເອກະສານລາຍງານການເງິນສະບັບຫຼ້າສຸດທີ່ຍື່ນໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ຕ້ອງລາຍງານກ່ຽວກັບເຫດການດັ່ງກ່າວເພີ່ມເຕີມ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບຊາບຢ່າງເປັນລາຍລັກອັກສອນ ພ້ອມທັງເປີດເຜີຍໃນໜັງສືຊວນຊື້.

**ມາດຕາ 12 (ປັບປຸງ) ໜັງສືຊວນຊື້**

ໜັງສືຊວນຊື້ ສໍາລັບການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນກ່ຽວກັບ ບໍລິສັດ ເປັນຕົ້ນ ປະຫວັດການສ້າງຕັ້ງ ແລະ ການເຄື່ອນໄຫວຂອງທຸລະກິດ ແລະ ປັດໄຈຄວາມສ່ຽງ ດ້ານມະຫາພາກ, ຂະແໜງການ, ທຸລະກິດ ແລະ ການອອກຈໍາໜ່າຍຮຸ້ນກູ້;
2. ຂໍ້ມູນກ່ຽວກັບ ຊີວະປະຫວັດຫຍໍ້ຂອງ ສະມາຊິກສະພາບໍລິຫານ, ຄະນະກໍາມະການຕ່າງໆຂອງສະພາບໍລິຫານທັງໝົດ ແລະ ຄະນະອໍານວຍການ;
3. ຂໍ້ມູນກ່ຽວກັບ ຮຸ້ນກູ້ ເປັນຕົ້ນ ຄຸນລັກສະນະຂອງຮຸ້ນກູ້, ວິທີການສະເໜີຂາຍ, ຈໍານວນ, ມູນຄ່າກໍານົດ, ລາຄາ, ໄລຍະເວລາເປີດຈອງຊື້ຮຸ້ນກູ້ທີ່ຄາດຄະເນໄວ້, ວິທີການຈອງຊື້, ການແບ່ງປັນ, ການສົ່ງມອບ ແລະ ເງື່ອນໄຂໃນການໂອນຮຸ້ນກູ້ ລວມທັງ ສະຫຼຸບເນື້ອໃນສໍາຄັນທີ່ກໍານົດກ່ຽວກັບສິດ ແລະ ໜ້າທີ່ຂອງຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້;
4. ຂໍ້ມູນກ່ຽວກັບ ຊື່ ແລະ ທີ່ຢູ່ ຂອງ ບໍລິສັດກວດສອບ, ບໍລິສັດທີ່ປຶກສາທາງດ້ານກົດໝາຍ, ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້, ຜູ້ຄໍ້າປະກັນການຊໍາລະໜີ້, ຕົວແທນຜູ້ຖືຮຸ້ນກູ້ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການຮ້ອງຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ;
5. ຂໍ້ມູນລະອຽດກ່ຽວກັບ ແຜນການນໍາໃຊ້ທຶນທີ່ລະດົມໄດ້ ແລະ ແຜນການເຄື່ອນໄຫວທຸລະກິດ;
6. ຂໍ້ມູນກ່ຽວກັບ ບັນຊີລາຍຊື່ຜູ້ມີອໍານາດຄວບຄຸມ;
7. ຂໍ້ມູນກ່ຽວກັບ ຂໍ້ຂັດແຍ່ງທາງດ້ານກົດໝາຍ ແລະ ລາຍການທີ່ກ່ຽວພັນ;
8. ຂໍ້ມູນກ່ຽວກັບ ຖານະການເງິນ ຂອງບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ;
9. ຂໍ້ມູນກ່ຽວກັບ ແຫຼ່ງທີ່ມາຂອງເງິນ ເພື່ອຊໍາລະຕົ້ນທຶນ ແລະ ດອກເບ້ຍ.

**ມາດຕາ 13 ການຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນແຕ່ລະຄັ້ງ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ ຕ້ອງເຮັດສັນຍາຄໍ້າປະກັນ ກັບ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້.

ກໍລະນີ ມີຫຼາຍບໍລິສັດຫຼັກຊັບຮ່ວມກັນຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ຕ້ອງມອບໃຫ້ບໍລິສັດຫຼັກຊັບໃດໜຶ່ງ ເປັນຜູ້ຕາງໜ້າເຮັດສັນຍາຄໍ້າປະກັນ ກັບ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້.

**ມາດຕາ 14 ການຈັດລໍາດັບຄວາມໜ້າເຊື່ອຖື**

ການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງມີການຈັດລໍາດັບຄວາມໜ້າເຊື່ອຖື ໂດຍບໍລິສັດຈັດລໍາດັບຄວາມໜ້າເຊື່ອ ທີ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 15 (ປັບປຸງ) ການຄໍ້າປະກັນການຊໍາລະໜີ້**

ການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງມີການຄໍ້າປະກັນການຊໍາລະໜີ້ ຈາກ ຜູ້ຄໍ້າປະກັນການຊໍາລະໜີ້ ກໍລະນີ ບໍ່ມີການຈັດລໍາດັບຄວາມໜ້າເຊື່ອຖື ຫຼື ຜົນການຈັດລໍາດັບຄວາມໜ້າເຊື່ອຖືຂອງຮຸ້ນກູ້ທີ່ຈະອອກຈໍາໜ່າຍ ຫາກຕໍ່າກວ່າ BBB.

ຜູ້ຄໍ້າປະກັນການຊໍາລະໜີ້ ແມ່ນທະນາຄານທຸລະກິດ ຫຼື ການຈັດຕັ້ງສາກົນ ທີ່ມີຖານະການເງິນດີ ແລະ ສາມາດຊໍາລະຄືນຮຸ້ນກູ້ ທັງຕົ້ນທຶນ ແລະ ດອກເບ້ຍ ເມື່ອຄົບກໍານົດ ແລະ ຄ່າໃຊ້ຈ່າຍອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນສັນຍາຄໍ້າປະກັນການຊໍາລະໜີ້ ແທນບໍລິສັດອອກຈໍາໜ່າຍຮຸ້ນກູ້. ສໍາລັບ ເງື່ອນໄຂຂອງຜູ້ຄໍ້າປະກັນການຊໍາລະໜີ້ ຕ້ອງໄດ້ຮັບການເຫັນດີຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ກໍລະນີ ມີຫຼາຍຜູ້ຄໍ້າປະກັນການຊໍາລະໜີ້ຮ່ວມກັນຄໍ້າປະກັນການຊໍາລະໜີ້ ຕ້ອງມອບໃຫ້ຜູ້ຄໍ້າປະກັນຊໍາລະໜີ້ໃດໜຶ່ງເປັນຜູ້ຕາງໜ້າເຮັດສັນຍາຄໍ້າປະກັນຊໍາລະໜີ້ ກັບ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້.

**ມາດຕາ 16 ການພິຈາລະນາການຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ເມື່ອໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຄົບຖ້ວນ ແລະ ຖືກຕ້ອງແລ້ວ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາການຮ້ອງຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ພາຍໃນກໍານົດເວລາ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບ ເປັນຕົ້ນໄປ. ໃນກໍລະນີ ຫາກປະຕິເສດ ກໍຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາການຮ້ອງຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຫາກມີຄວາມຈໍາເປັນ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ລວມທັງ ເອກະສານຢັ້ງຢືນການກວດສອບຈາກບໍລິສັດກວດສອບ, ມີສິດເຊີນ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ, ທີ່ປຶກສາດ້ານການເງິນ, ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງເພື່ອມາປຶກສາຫາລື ພ້ອມດຽວກັນນັ້ນ ກໍ່ຍັງມີສິດໃນການລົງຢ້ຽມຊົມກິດຈະການ ຫຼື ເກັບກໍາຂໍ້ມູນຂອງບໍລິສັດ ແລະ ພາກສ່ວນດັ່ງກ່າວ ຕ້ອງອໍານວຍຄວາມສະດວກຮອບດ້ານໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 17 ການເປີດເຜີຍຂໍ້ມູນກ່ຽວກັບແຜນການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ພາຍຫຼັງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ ບໍລິສັດທີ່ມີຈຸດປະສົງອອກ

ຈຳໜ່າຍຮຸ້ນກູ້ ສາມາດເປີດເຜີຍຂໍ້ມູນກ່ຽວກັບແຜນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕາມເນື້ອໃນທີ່ໄດ້ລະບຸໄວ້ໃນເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ ຍົກເວັ້ນ ຂໍ້ມູນກ່ຽວກັບ ມູນຄ່າຮຸ້ນກູ້ທີ່ຈະອອກ, ຜົນຕອບແທນ, ໄລຍະເວລາ ທີ່ຈະອອກຈຳໜ່າຍ ຫຼື ຂໍ້ມູນອື່ນທີ່ອາດກະທົບຕໍ່ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບໍ່ອະນຸຍາດໃຫ້ເປີດເຜີຍ.

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບແຜນການເປີດເຜີຍຂໍ້ມູນຜ່ານພາຫະນະສື່ມວນຊົນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບລ່ວງໜ້າຢ່າງໜ້ອຍ ໜຶ່ງວັນ ລັດຖະການ ກ່ອນວັນເປີດເຜີຍຂໍ້ມູນດັ່ງກ່າວ.

**ມາດຕາ 18 ຄ່າທຳນຽມການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງເສຍຄ່າທຳນຽມ ດັ່ງນີ້:

1. ຄ່າຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ ຈຳນວນ 15.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຍື່ນຄຳຮ້ອງດັ່ງກ່າວ;
2. ຄ່າໃບອະນຸຍາດການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຈຳນວນ ສູນຈຸດສູນສອງສ່ວນຮ້ອຍຂອງມູນຄ່າລວມຂອງຮຸ້ນກູ້ທີ່ອອກຈຳໜ່າຍ ແຕ່ບໍ່ໃຫ້ຕ່ຳກວ່າ 30.000.000 ກີບ ແລະ ຕ້ອງຊຳລະພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ເປັນຕົ້ນໄປ;
3. ຄ່າຄຸ້ມຄອງປະຈຳປີ ຈຳນວນ 10.000.000 ກີບ ແລະ ຕ້ອງຊຳລະພາຍໃນໄຕມາດທີໜຶ່ງຂອງທຸກໆປີ ຍົກເວັ້ນ ປີທີ່ອອກຈຳໜ່າຍຮຸ້ນກູ້ຄັ້ງທຳອິດ. ສຳລັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ທີ່ເປັນບໍລິສັດຈົດທະບຽນ ຈະຖືກຍົກເວັ້ນຄ່າຄຸ້ມຄອງປະຈຳປີ.

**ມາດຕາ 19 (ປັບປຸງ) ຂັ້ນຕອນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ພາຍຫຼັງໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ປະກາດກ່ຽວກັບການອະນຸຍາດໃຫ້ອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ;
2. ໂຄສະນາການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຜ່ານພາຫະນະສື່ມວນຊົນ;
3. ຈອງຊື້ຮຸ້ນກູ້ ແລະ ວາງເງິນມັດຈຳ;
4. ແບ່ງປັນຮຸ້ນກູ້;
5. ສົ່ງເງິນມັດຈຳຄືນ;
6. ອອກໃບຢັ້ງຢືນການຖືຄອງຮຸ້ນກູ້ໃຫ້ແກ່ຜູ້ຊື້ຮຸ້ນກູ້.

ຂັ້ນຕອນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງໃຫ້ສຳເລັດພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບໃບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນກູ້ ເປັນຕົ້ນໄປ. ກໍລະນີ ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຫາກບໍ່ສຳເລັດຕາມກຳນົດເວລາດັ່ງກ່າວ ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ສາມາດສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອເພີ່ມເວລາຈຳໜ່າຍຮຸ້ນກູ້ຕື່ມອີກກໍໄດ້ ແຕ່ບໍ່ໃຫ້ເກີນ ສາມສິບວັນ ແລະ ຕ້ອງສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງໜ້ອຍສາມ ວັນລັດຖະການ ກ່ອນວັນສິ້ນສຸດກຳນົດເວລາດັ່ງກ່າວ.

**ມາດຕາ 20 ການປະກາດກ່ຽວກັບການອະນຸຍາດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ພາຍຫຼັງໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງປະກາດກ່ຽວກັບການໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນກູ້ດັ່ງກ່າວໃຫ້ແກ່ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ ຫ້າວັນລັດຖະການຕໍ່ເນື່ອງ.

**ມາດຕາ 21 ການໂຄສະນາການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນຜ່ານພາຫະນະສື່ມວນຊົນ**

ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງເຜີຍແຜ່ໜັງສືຊວນຊື້ຂອງຕົນ ໃຫ້ແກ່ມວນຊົນຜ່ານລະບົບເປີດເຜີຍຂໍ້ມູນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ດຳເນີນການໂຄສະນາການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ ຫ້າວັນຕໍ່ເນື່ອງກ່ອນການອອກຈຳໜ່າຍ.

**ມາດຕາ 22 (ໃໝ່) ການຈອງຊື້ຮຸ້ນກູ້ ແລະ ວາງເງິນມັດຈຳ**

ການຈອງຊື້ຮຸ້ນກູ້ ຕ້ອງດຳເນີນຜ່ານລະບົບ ແລະ ວິທີການ ທີ່ໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງແຈກຢາຍໃບຈອງຊື້ຮຸ້ນກູ້ ໃຫ້ແກ່ຜູ້ລົງທຶນ ທີ່ສົນໃຈຊື້ຮຸ້ນກູ້ ພ້ອມດ້ວຍ ໜັງສືຊວນຊື້ ໃນຮູບແບບຂອງສຳເນົາເອກະສານ ຫຼື ໃນຮູບແບບເອເລັກໂຕຣນິກ ຍົກເວັ້ນ ກໍລະນີທີ່ ຜູ້ລົງທຶນ ໄດ້ສະແດງເຈດຈຳນົງ ທີ່ຈະບໍ່ຮັບເອົາໜັງສືຊວນຊື້ດັ່ງກ່າວ.

ເວລາເປີດການຈອງຊື້ຮຸ້ນກູ້ ຜູ້ລົງທຶນ ຕ້ອງໂອນເງິນມັດຈຳໃຫ້ຄົບຖ້ວນ ຕາມມູນຄ່າຮຸ້ນກູ້ທີ່ຕົນສັ່ງຈອງ ເຂົ້າໃນບັນຊີເງິນສະເພາະສຳລັບການເປີດຈອງຊື້ຮຸ້ນກູ້ ຂອງຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ທີ່ເປີດຢູ່ໃນທະນາຄານທຸລະກິດໃດໜຶ່ງ ຢູ່ ສປປ ລາວ ພ້ອມທັງແຈ້ງຜົນກ່ຽວກັບການໂອນເງິນມັດຈຳໃຫ້ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ຊາບ.

ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງລາຍງານຜົນການຈອງຊື້ຮຸ້ນກູ້ປະຈຳວັນໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ ພາຍໃນກຳນົດເວລາ ໜຶ່ງວັນ ລັດຖະການ ຖັດມາ.

ໃນໄລຍະເວລາເປີດການຈອງຊື້ຮຸ້ນກູ້ ຜູ້ລົງທຶນໃດ ທີ່ໄດ້ສຳເລັດການຈອງຊື້ຮຸ້ນກູ້ ແລະ ວາງເງິນມັດຈຳແລ້ວ ແມ່ນບໍ່ສາມາດຍົກເລີກການຈອງຊື້ຮຸ້ນກູ້ຂອງຕົນໄດ້ ຍົກເວັ້ນກໍລະນີ ໄດ້ຕົກລົງໄວ້ເປັນຢ່າງອື່ນ.

ກໍລະນີ ຂາຍບໍ່ໝົດພາຍໃນກຳນົດເວລາ ທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ອະນຸຍາດ, ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ສາມາດສະເໜີຂະຫຍາຍໄລຍະເວລາເປີດການຈອງຊື້ຮຸ້ນກູ້ ໄດ້ໜຶ່ງ ຄັ້ງ ແຕ່ບໍ່ເກີນ ສາມສິບວັນ.

ສຳລັບ ຜູ້ຈອງຊື້ຮຸ້ນທີ່ບໍ່ຍົກເລີກການຈອງຊື້ຮຸ້ນກູ້ ໃນໄລຍະຂະຫຍາຍເວລາເປີດການຈອງຊື້ຮຸ້ນກູ້, ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງຮັບຜິດຊອບຈ່າຍດອກເບ້ຍໃຫ້ແກ່ຜູ້ຈອງຊື້ຮຸ້ນກູ້ ຕາມອັດຕາດອກເບ້ຍເງິນຝາກປະຢັດຂອງທະນາຄານຕົວແທນ ຂອງຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ໃນໄລຍະນັ້ນ ນັບແຕ່ວັນທີ່ມີການຂະຫຍາຍໄລຍະເວລາເປີດການຈອງຊື້ຮຸ້ນກູ້ ຈົນກວ່າຈະສິ້ນສຸດໄລຍະເວລາເປີດການຈອງຊື້ຮຸ້ນກູ້.

**ມາດຕາ 23 (ໃໝ່) ການແບ່ງປັນຮຸ້ນກູ້**

ພາຍຫຼັງຜູ້ລົງທຶນສຳເລັດການຈອງຊື້ຮຸ້ນກູ້ ແລະ ໂອນເງິນມັດຈຳ ເຂົ້າໃນບັນຊີເງິນສະເພາະສຳລັບການເປີດຈອງຊື້ຮຸ້ນກູ້, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງດຳເນີນການແບ່ງປັນຮຸ້ນກູ້ໃຫ້ຜູ້ລົງທຶນທີ່ໄດ້ຈອງຊື້ຮຸ້ນກູ້ ຕາມວິທີການ ທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້.

**ມາດຕາ 24 (ໃໝ່) ການສົ່ງເງິນມັດຈຳຄືນ**

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງສົ່ງເງິນມັດຈຳຄືນ ໃຫ້ແກ່ຜູ້ຈອງຊື້ຮຸ້ນກູ້ ກໍລະນີ ມີການຂະຫຍາຍໄລຍະເວລາເປີດການຈອງຊື້ຮຸ້ນກູ້, ການບໍ່ໄດ້ຮັບການແບ່ງປັນຮຸ້ນກູ້, ການຂາຍຮຸ້ນກູ້ບໍ່ສຳເລັດ, ການໂຈະການອອກຈຳໜ່າຍຮຸ້ນກູ້ ແລະ ການຍົກເລີກການອອກຈຳໜ່າຍຮຸ້ນກູ້.

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງສົ່ງເງິນມັດຈຳຄືນໃຫ້ແກ່ຜູ້ຈອງຊື້ຮຸ້ນກູ້ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນຂະຫຍາຍໄລຍະເວລາການເປີດການຈອງຊື້ຮຸ້ນກູ້, ວັນສິ້ນສຸດການອອກຈຳໜ່າຍຮຸ້ນກູ້, ວັນໄດ້ຮັບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້, ວັນສະເໜີຂອງຜູ້ຈອງຊື້ຮຸ້ນກູ້ ຫຼື ວັນແຈ້ງການກ່ຽວກັບການຍົກເລີກການອອກຈຳໜ່າຍຮຸ້ນກູ້ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນ ວັກທີໜຶ່ງ ຂອງມາດຕານີ້ ເປັນຕົ້ນໄປ.

ກໍລະນີ ຫາກກາຍກຳນົດເວລາໃນການສົ່ງເງິນມັດຈຳຄືນ ຕາມທີ່ໄດ້ກຳນົດໄວ້ໃນ ວັກທີສອງ ຂອງມາດຕານີ້ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງຮັບຜິດຊອບຈ່າຍດອກເບ້ຍໃຫ້ແກ່ຜູ້ຈອງຊື້ຮຸ້ນກູ້ ຕາມອັດຕາດອກເບ້ຍເງິນຝາກປະຢັດ ຂອງທະນາຄານຕົວແທນ ຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ໃນໄລຍະນັ້ນ ຈົນກວ່າຈະສົ່ງເງິນມັດຈຳຄືນໃຫ້ແກ່ຜູ້ຈອງຊື້ຮຸ້ນກູ້ຄົບຖ້ວນ.

**ມາດຕາ 25 ການອອກໃບຢັ້ງຢືນການຖືຄອງຮຸ້ນກູ້**

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງອອກໃບຢັ້ງຢືນການຖືຄອງຮຸ້ນກູ້ ໃຫ້ແກ່ຜູ້ຊື້ຮຸ້ນກູ້ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນສິ້ນສຸດການຈອງຊື້ຮຸ້ນກູ້ໃຫ້ແກ່ມວນຊົນ ເປັນຕົ້ນໄປ.

**ມາດຕາ 26 ການໂອນເງິນທີ່ລະດົມໄດ້**

ພາຍຫຼັງໄດ້ຮັບໃບຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນກູ້ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບແລ້ວ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງໂອນເງິນທີ່ລະດົມໄດ້ຈາກ ບັນຊີເງິນສະເພາະສຳລັບການເປີດຈອງຊື້ຮຸ້ນກູ້ ເຂົ້າໃນບັນຊີເງິນສະເພາະສຳລັບທຶນທີ່ລະດົມໄດ້ຂອງບໍລິສັດອອກຈຳໜ່າຍຮຸ້ນກູ້ທີ່ເປີດຢູ່ໃນທະນາຄານທຸລະກິດໃດໜຶ່ງ ຢູ່ ສປປ ລາວ.

**ມາດຕາ 27 (ໃໝ່) ການລາຍງານຜົນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງລາຍງານຜົນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ ຢ່າງເປັນລາຍລັກອັກສອນ ພາຍໃນຫ້າວັນ ລັດຖະການ ນັບແຕ່ວັນສິ້ນສຸດການຈອງຊື້ຮຸ້ນກູ້ໃຫ້ແກ່ມວນຊົນ ເປັນຕົ້ນໄປ.

**ມາດຕາ 28 ການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບການລາຍງານຜົນການອອກຈຳໜ່າຍຮຸ້ນກູ້ ເປັນຕົ້ນໄປ.

**ມາດຕາ 29 (ປັບປຸງ) ການນຳໃຊ້ທຶນທີ່ລະດົມໄດ້**

ບໍລິສັດອອກຈຳໜ່າຍຮຸ້ນກູ້ ສາມາດນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ພາຍຫຼັງໄດ້ຮັບໃບຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

ກໍລະນີ ບໍລິສັດອອກຈຳໜ່າຍຮຸ້ນກູ້ ມີການປ່ຽນແປງຈຸດປະສົງການນຳໃຊ້ທຶນທີ່ລະດົມໄດ້ບາງສ່ວນ ຫຼື ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ຕ້ອງໄດ້ຮັບການເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ເສຍກ່ອນ.

**ມາດຕາ 30 (ໃໝ່) ການລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້**

ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຈົນກວ່າຈະນຳໃຊ້ທຶນດັ່ງກ່າວໝົດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍຜ່ານການຢັ້ງຢືນຈາກທີ່ປຶກສາດ້ານການເງິນ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດໄຕມາດ ເປັນຕົ້ນໄປ.

**ມາດຕາ 31 (ໃໝ່) ການໂຈະການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດສັ່ງໂຈະການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ເປັນເວລາສູງສຸດ ຫົກສິບວັນ ໃນກໍລະນີ ການສະໜອງຂໍ້ມູນບໍ່ຖືກຕ້ອງ ຫຼື ບໍ່ປະຕິບັດຕາມຂັ້ນຕອນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ທີ່ສົ່ງ ຫຼື ອາດຈະສົ່ງ ຜົນເສຍຫາຍຕໍ່ຜູ້ລົງທຶນ.

ກໍລະນີ ຖືກສັ່ງໂຈະ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງເປີດເຜີຍຂໍ້ມູນກ່ຽວກັບການຖືກສັ່ງໂຈະດັ່ງກ່າວໃຫ້ມວນຊົນຊາບ ຜ່ານໃນເວັບໄຊຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເວັບໄຊຂອງບໍລິສັດ ແລະ ພາຫະນະສື່ມວນຊົນອື່ນ ພາຍໃນກຳນົດເວລາ ຫ້າວັນ ລັດຖະການຕໍ່ເນື່ອງ ນັບແຕ່ວັນໄດ້ຮັບແຈ້ງການກ່ຽວກັບການໂຈະການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

ພາຍຫຼັງ ສາມາດແກ້ໄຂສາເຫດຂອງການສັ່ງໂຈະໄດ້ແລ້ວ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງອອກແຈ້ງການຍົກເລີກການສັ່ງໂຈະດັ່ງກ່າວ ແລະ ອະນຸຍາດໃຫ້ສາມາດດຳເນີນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕໍ່ໄປໄດ້ຕາມຈຳນວນວັນທີ່ຍັງເຫຼືອທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງປະກາດກ່ຽວກັບແຈ້ງການຍົກເລີກການສັ່ງໂຈະ ໃຫ້ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ເປັນເວລາຢ່າງໜ້ອຍ ຫ້າວັນລັດຖະການຕໍ່ເນື່ອງ ນັບແຕ່ວັນໄດ້ຮັບແຈ້ງການກ່ຽວກັບການຍົກເລີກການສັ່ງໂຈະ ເປັນຕົ້ນໄປ.

**ມາດຕາ 32 (ໃໝ່) ການຍົກເລີກການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດຍົກເລີກການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໃນກໍລະນີ ດັ່ງຕໍ່ໄປນີ້:

1. ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ບໍ່ສາມາດແກ້ໄຂສາເຫດທີ່ຖືກສັ່ງໂຈະໄດ້ ພາຍໃນກຳນົດເວລາ ຫົກສິບວັນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 31 ຂອງຂໍ້ຕົກລົງສະບັບນີ້;
2. ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ສະເໜີຍົກເລີກການອອກຈຳໜ່າຍຮຸ້ນກູ້ ຕາມມະຕິຂອງ ກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ;
3. ຕາມຄຳສັ່ງ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດ;
4. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການກ່ຽວກັບການຍົກເລີກການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງປະກາດກ່ຽວກັບແຈ້ງການດັ່ງກ່າວ ໃຫ້ແກ່ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ພາຍໃນກຳນົດເວລາຢ່າງໜ້ອຍ ຫ້າວັນ ລັດຖະການຕໍ່ເນື່ອງ.

## ໝວດທີ 3
## ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ

### ມາດຕາ 33 ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ

ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ແມ່ນການອອກຈຳໜ່າຍຮຸ້ນກູ້ ໃຫ້ແກ່ຜູ້ລົງທຶນ ປະເພດສະຖາບັນ ແລະ ບຸກຄົນທີ່ມີເງື່ອນໄຂຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊຶ່ງເປັນການອອກຈຳໜ່າຍຮຸ້ນກູ້ທີ່ມີຈຳນວນຜູ້ລົງທຶນລວມກັນທັງໝົດບໍ່ເກີນ ໜຶ່ງຮ້ອຍລາຍ ພາຍໃນໄລຍະໜຶ່ງປີ ແລະ ມີອັດຕາສ່ວນການຖືຄອງຮຸ້ນກູ້ຂອງຜູ້ລົງທຶນປະເພດສະຖາບັນ ເທົ່າກັບ ຫຼື ຫຼາຍກວ່າ ແປດສິບສ່ວນຮ້ອຍ ຂອງຈຳນວນການອອກຈຳໜ່າຍຮຸ້ນກູ້ໃນແຕ່ລະຄັ້ງ.

### ມາດຕາ 34 (ປັບປຸງ) ເງື່ອນໄຂການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດມະຫາຊົນ ຫຼື ບໍລິສັດຈຳກັດ (ຍົກເວັ້ນ ບໍລິສັດຈຳກັດຜູ້ດຽວ);
2. ສ້າງຕັ້ງ ແລະ ເຄື່ອນໄຫວມາແລ້ວ ຢ່າງໜ້ອຍ ໜຶ່ງປີ;
3. ມີແຜນການອອກຈຳໜ່າຍຮຸ້ນກູ້ ແລະ ການນຳໃຊ້ທຶນ ໂດຍຜ່ານການຮັບຮອງຈາກ ກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ;
4. ມີເອກະສານລາຍງານການເງິນ ໜຶ່ງປີ ຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ ໃຫ້ແກ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ;
5. ມີແຜນການຊຳລະຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນແຫຼ່ງທຶນສຳລັບການ ຊຳລະດັ່ງກ່າວ;
6. ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍຂອງຮຸ້ນກູ້ໃນບ້ວງທີ່ອອກຜ່ານມາ ຕາມກຳນົດເວລາໃນການຊຳລະ ກໍລະນີ ທີ່ມີການອອກຈຳໜ່າຍຮຸ້ນກູ້ເພີ່ມ;

7. ມີເງື່ອນໄຂອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 35 (ປັບປຸງ) ເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ**

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ ຕ້ອງຍື່ນຄໍາຮ້ອງ ແລະ ເອກະສານປະກອບ ຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄໍາຮ້ອງຂໍອອກຈໍາໜ່າຍຮຸ້ນກູ້ ຕາມແບບພິມຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ສໍາເນົາໃບທະບຽນວິສາຫະກິດ ແລະ ສໍາເນົາໃບທະບຽນສໍາປະທານ ກໍລະນີ ເປັນທຸລະກິດສໍາປະທານ;
3. ສໍາເນົາໃບຢັ້ງຢືນປະຈໍາຕົວຜູ້ເສຍອາກອນ;
4. ສໍາເນົາກົດລະບຽບຂອງບໍລິສັດ;
5. ມະຕິກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ທີ່ຮັບຮອງກ່ຽວກັບການອອກຈໍາໜ່າຍຮຸ້ນກູ້ ແລະ ການນໍາໃຊ້ທຶນ;
6. ບັນຊີລາຍຊື່ຜູ້ຖືຮຸ້ນ ແຕ່ ໜຶ່ງສ່ວນຮ້ອຍ ຂຶ້ນໄປ;
7. ໃບຢັ້ງຢືນຄວາມພ້ອມການອອກຈໍາໜ່າຍຮຸ້ນກູ້ຈາກ ທີ່ປຶກສາດ້ານການເງິນ (ຖ້າມີ);
8. ບົດລາຍງານການປະເມີນມູນຄ່າຊັບສິນ ໂດຍໄດ້ຮັບການຮັບຮອງຈາກຜູ້ປະເມີນມູນຄ່າຊັບສິນ ກໍລະນີ ການອອກຈໍາໜ່າຍຮຸ້ນກູ້ ມີຫຼັກຊັບຄໍ້າປະກັນ.
9. ເອກະສານລາຍງານການເງິນ ໜຶ່ງປີ ຄືນຫຼັງ;
10. ເອກະສານ ກ່ຽວກັບແຜນການຊໍາລະຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນແຫຼ່ງທຶນສໍາລັບການຊໍາລະດັ່ງກ່າວ;
11. ໜັງສືຊວນຊື້ສະບັບຫຍໍ້ (Factsheet) ຕາມການກໍານົດຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
12. ຂໍ້ກໍານົດກ່ຽວກັບສິດ ແລະ ໜ້າທີ່ຂອງຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້;
13. ສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ລະຫວ່າງ ບໍລິສັດອອກຈໍາໜ່າຍຮຸ້ນກູ້ ກັບ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ (ຖ້າມີ);
14. ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ (ຖ້າມີ);
15. ເອກະສານອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ ຕ້ອງຮ່ວມກັບທີ່ປຶກສາດ້ານການເງິນ (ຖ້າມີ) ເປັນຜູ້ກະກຽມເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ ໃນແຕ່ລະຄັ້ງ ຊຶ່ງຕ້ອງຮັບຜິດຊອບຕໍ່ເນື້ອໃນ ແລະ ຂໍ້ມູນທີ່ບົ່ງໄວ້ໃນເອກະສານດັ່ງກ່າວ ພ້ອມທັງເກັບຮັກສາເອກະສານປະຕິບັດງານ ທີ່ກ່ຽວຂ້ອງດັ່ງກ່າວໄວ້ຢ່າງໜ້ອຍ ສິບປີ.

**ມາດຕາ 36 ຄ່າທໍານຽມການອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ**

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ ຕ້ອງເສຍຄ່າທໍານຽມ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 18 ຂໍ້ 1 ແລະ 3 ຂອງຂໍ້ຕົກລົງສະບັບນີ້. ນອກນັ້ນ ຕ້ອງເສຍຄ່າທໍານຽມເພີ່ມເຕີມ ຄື: ຄ່າໃບອະນຸຍາດອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ ສູນຈຸດສູນໜຶ່ງສ່ວນຮ້ອຍ ຂອງມູນຄ່າຮຸ້ນກູ້ທີ່ສະເໜີອອກຈໍາ

ໜ່າຍ ແຕ່ບໍ່ໃຫ້ຕໍ່າກວ່າ 30.000.000 ກີບ ແລະ ຕ້ອງຊໍາລະພາຍໃນກໍານົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດການອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ ເປັນຕົ້ນໄປ.

**ມາດຕາ 37 (ປັບປຸງ) ຂັ້ນຕອນການອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ**

ພາຍຫຼັງໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ ແກ່ເປົ້າໝາຍຜູ້ລົງທຶນ ຕ້ອງປະຕິບັດຕາມຂັ້ນຕອນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້. ສໍາລັບ ການໂຄສະນາ ສາມາດໂຄສະນາ ຫຼື ບໍ່ໂຄສະນາກໍໄດ້.

**ມາດຕາ 38 ການນໍາໃຊ້ບົດບັນຍັດຂອງການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ນອກຈາກບົດບັນຍັດຕ່າງໆ ຕາມທີ່ໄດ້ກໍານົດໄວ້ໃນໝວດນີ້ ການກະກຽມເອກະສານລາຍງານການເງິນ, ການພິຈາລະນາການຂໍອອກຈໍາໜ່າຍຮຸ້ນກູ້, ການຢັ້ງຢືນຜົນການອອກຈໍາໜ່າຍຮຸ້ນກູ້ ແລະ ການນໍາໃຊ້ທຶນທີ່ລະດົມໄດ້ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນບົດບັນຍັດຂອງ ການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ທີ່ໄດ້ລະບຸໄວ້ໃນໝວດທີ 2 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ການຮັບຝາກ, ການຊື້-ຂາຍ ຮຸ້ນກູ້ ແລະ ຂໍ້ຫ້າມ

**ມາດຕາ 39 ການຮັບຝາກຮຸ້ນກູ້**

ບໍລິສັດອອກຈໍາໜ່າຍຮຸ້ນກູ້ ຕ້ອງເອົາຮຸ້ນກູ້ໄປຝາກໄວ້ໃນສູນຮັບຝາກຫຼັກຊັບ ພາຍໃນກໍານົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບໃບຢັ້ງຢືນການອອກຈໍາໜ່າຍຮຸ້ນກູ້ ຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

**ມາດຕາ 40 ການຊື້-ຂາຍ ຮຸ້ນກູ້ ໃນຕະຫຼາດຂັ້ນສອງ**

ຮຸ້ນກູ້ທີ່ອອກຈໍາໜ່າຍໃຫ້ແກ່ມວນຊົນ ຕ້ອງຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ສາມາດຊື້-ຂາຍ ໂດຍປະຕິບັດຕາມເງື່ອນໄຂ ແລະ ຂັ້ນຕອນ ຕາມການກໍານົດໄວ້ໃນລະບຽບການສະເພາະຂອງຕະຫຼາດຫຼັກຊັບລາວ.

**ມາດຕາ 41 ຂໍ້ຫ້າມ**

ຫ້າມບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້, ບໍລິສັດອອກຈໍາໜ່າຍຮຸ້ນກູ້, ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້, ຜູ້ຄໍ້າປະກັນການຊໍາລະໜີ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້, ຜູ້ປະເມີນມູນຄ່າຊັບສິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການອອກຈໍາໜ່າຍຮຸ້ນກູ້ ທີ່ມີພຶດຕິກໍາໃດໜຶ່ງ ທີ່ເປັນການລະເມີດ ບໍ່ວ່າທາງກົງ ຫຼື ທາງອ້ອມ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 42 ນະໂຍບາຍຕໍ່ຜູ້ມີຜົນງານ**

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້, ບໍລິສັດອອກຈໍາໜ່າຍຮຸ້ນກູ້, ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້, ຜູ້ຄໍ້າປະກັນການຊໍາລະໜີ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້, ຜູ້ປະເມີນມູນຄ່າຊັບສິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການອອກຈໍາໜ່າຍຮຸ້ນກູ້ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

**ມາດຕາ 43 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້, ບໍລິສັດອອກຈໍາໜ່າຍຮຸ້ນກູ້, ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້, ຜູ້ຄໍ້າປະກັນການຊໍາລະໜີ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້, ຜູ້ປະເມີນມູນຄ່າຊັບສິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການອອກຈໍາໜ່າຍຮຸ້ນກູ້ທີ່ລະເມີດຂໍ້ຕົກລົງສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ລັດ, ສັງຄົມ, ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກມາດຕະການ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 166, ມາດຕາ 167, ມາດຕາ 168, ມາດຕາ 169 ແລະ ມາດຕາ 170 ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

ກໍລະນີ ບໍລິສັດອອກຈໍາໜ່າຍຮຸ້ນກູ້ ລາຍງານຊັກຊ້າ, ລາຍງານບໍ່ຖືກຕ້ອງ ຕາມຄວາມເປັນຈິງ ຫຼື ບໍ່ລາຍງານ ກ່ຽວກັບການນໍາໃຊ້ທຶນທີ່ລະດົມໄດ້ ຈະຖືກມາດຕະການປັບໃໝ ດັ່ງນີ້:

- ລາຍງານຊັກຊ້າ ຈະຖືກປັບໃໝ 1.000.000 ກີບ ຕໍ່ວັນ;
- ລາຍງານບໍ່ຖືກຕ້ອງ ຈະຖືກປັບໃໝ 30.000.000 ກີບ ພ້ອມທັງໃຫ້ປັບປຸງໃຫ້ຖືກຕ້ອງ;
- ບໍ່ລາຍງານ ຈະຖືກປັບໃໝ 50.000.000 ກີບ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 44 ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້, ບໍລິສັດອອກຈໍາໜ່າຍຮຸ້ນກູ້, ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້, ຜູ້ຄໍ້າປະກັນການຊໍາລະໜີ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້, ຜູ້ປະເມີນມູນຄ່າຊັບສິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການອອກຈໍາໜ່າຍຮຸ້ນກູ້ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 45 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນ ລະບຽບວ່າດ້ວຍການອອກຈໍາໜ່າຍຮຸ້ນກູ້ ສະບັບເລກທີ 019/ ຄຄຊ, ລົງວັນທີ 22 ທັນວາ 2014.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ ປະທານ

ສົມດີ ດວງດີ